ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະລາດ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຈັດຕັ້ງແລະພະນັກງານ

ເລກທີ 130 /ກຈພ
ນະຄອນຫຼວງວຽງຈັນ, ວັນທີ 31 AUG 2017

ຫ້ອງການ ຄຄຊ
ເລກທີ 933
ວັນທີ 31 AUG 2017
ໂທລະສັບ 021 217770

## ແຈ້ງການ

**ເຖິງ:** ບັນດາທ່ານ ຫົວໜ້າກົມ ແລະ ທຽບເທົ່າພາຍໃນ ທຫລ ທີ່ນັບຖື.

**ເລື່ອງ:** ນຳສົ່ງພະນັກງານ ເພື່ອເປັນເປົ້າໝາຍສະເໜີຂັ້ນເທິງພິຈາລະນາສະໝັກເອົາທຶນການສຶກສາປະລິນຍາໂທ ແລະ ເອກ ຂອງລັດຖະບານປະເທດ ຍີ່ປຸ່ນ ໃນສົກຮຽນ 2018-2019.

- ອີງຕາມແຈ້ງການຂອງກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1500/ກນ.17 ລົງວັນທີ 26/7/2017;
- ອີງຕາມໜັງສືສະເໜີຂອງອົງການ JICE JDS ປະຈຳ ສປປ ລາວ ສະບັບລົງວັນທີ 26/7/2017.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ກະຊວງສຶກສາທິການ ແລະ ກິລາ ໄດ້ແຈ້ງມາຍັງ ທຫລ ເພື່ອນຳສົ່ງພະນັກງານສະໝັກເອົາທຶນການສຶກສາປະລິນຍາໂທ ແລະ ປະລິນຍາເອກ ໃນສາຂາຕ່າງໆ (ລະບົບພາສາອັງກິດ) ພາຍໃຕ້ທຶນຂອງລັດຖະບານປະເທດ ຍີ່ປຸ່ນ ສົກປີ 2018-2019, ດັ່ງມີລາຍລະອຽດລຸ່ມນີ້:

**I. ທຶນການສຶກສາຂອງ JDS**

1. ລະດັບປະລິນຍາໂທ ໃນສາຂາ Master of Economics, ໄລຍະເວລາຮຽນ 2 ປີ ຢູ່ Yamaguchi University;
2. ລະດັບປະລິນຍາເອກ ໃນສາຂາທີ່ມີຄວາມສົນໃຈ ແລະ ຕິດພັນກັບໜ້າທີ່ຄວາມຮັບຜິດຊອບ, ໄລຍະເວລາຮຽນ 3 ປີ.

❖ ຜູ້ຈະສະໝັກຕ້ອງມີບາງມາດຕະຖານ-ເງື່ອນໄຂເບື້ອງຕົ້ນດັ່ງລຸ່ມນີ້:

- ເປັນພະນັກງານທີ່ມີປີການ 2 ປີຂຶ້ນໄປ;
- ຮຽນຈົບລະດັບປະລິນຍາຕີ ໃນສາຂາທີ່ກ່ຽວຂ້ອງ ແລະ ມີຄະແນນສະເລ່ຍໃນລະດັບດີ ສຳລັບສະໝັກປະລິນຍາໂທ ແລະ ອາຍຸບໍ່ເກີນ 39 ປີ;
- ຮຽນຈົບລະດັບປະລິນຍາໂທ ພາຍໃຕ້ທຶນຂອງລັດຖະບານຍີ່ປຸ່ນ (JDS) ເທົ່ານັ້ນ ສຳລັບສະໝັກປະລິນຍາເອກ, ອາຍຸບໍ່ເກີນ 45 ປີ ແລະ ຕ້ອງປະສານສົມທົບກັບອາຈານທີ່ປຶກສາທີ່ຕົນໄດ້ຮຽນຈົບໃນລະດັບປະລິນຍາໂທ ເພື່ອຢັ້ງຢືນການເຫັນດີ ແລະ ແນະນຳບົດຄົ້ນຄວ້າທີ່ຈະຂຽນໃນລະດັບປະລິນຍາເອກ, ຖ້າອາຈານທີ່ປຶກສາກ່ຽວຂ້ອງເຫັນດີ ຈຶ່ງສາມາດສະໝັກເອົາທຶນດັ່ງກ່າວໄດ້;
- ມີສຸຂະພາບສົມບູນແຂງແຮງດີ ແລະ ສາມາດຮຽນຈົບຕາມການກຳນົດ;
- ລາຍລະອຽດເພີ່ມເຕີມໃນການສະໝັກປະລິນຍາໂທ ສາມາດເຂົ້າເບິ່ງໄດ້ທີ່ **Website: http://jds-scholarship.org**.

**II. ທຶນການສຶກສາປະລິນຍາໂທ ຂອງ ADB-JSP, JJ/WBGSP ແລະ IMF-JISPA**

1. ສາຂາທີ່ໃຫ້ສະໝັກມີ 2 ສາຂາ, ໄລຍະເວລາ 2 ປີ ຢູ່ University of Tokyo ຄື:
   ① Economic Policy, Finance and Development (EPFD);
   ② Public Management and International Relations (PMIR).

2. ລາຍລະອຽດຂອງຜູ້ຈະສະໝັກຕ້ອງມີບາງມາດຕະຖານ-ເງື່ອນໄຂເບື້ອງຕົ້ນດັ່ງລຸ່ມນີ້:

- ເປັນພະນັກງານທີ່ມີປີການ 2 ປີຂຶ້ນໄປ;
- ຮຽນຈົບລະດັບປະລິນຍາຕີ ໃນສາຂາທີ່ກ່ຽວຂ້ອງ ແລະ ມີຄະແນນສະເລ່ຍໃນລະດັບດີ;
- ມີສຸຂະພາບສົມບູນແຂງແຮງດີ, ອາຍຸບໍ່ເກີນ 35 ປີ ແລະ ສາມາດຮຽນຈົບຕາມການກຳນົດ;
- ລາຍລະອຽດເພີ່ມເຕີມສາມາດເຂົ້າເບິ່ງໄດ້ທີ່ **Website: http://pp.u-tokyo.ac.jp/en/mppip/**

ສະນັ້ນ, ກົມຈັດຕັ້ງແລະພະນັກງານ ຈຶ່ງແຈ້ງມາຍັງທ່ານ ເພື່ອຄັດເລືອກພະນັກງານຂອງຕົນຜູ້ທີ່ມີມາດຕະຖານ-ເງື່ອນໄຂສູງສຸດ ສະໝັກເອົາທຶນການສຶກສາດັ່ງກ່າວຂ້າງເທິງ ຈຳນວນ..3.....ທ່ານ (ໃນນັ້ນ, ສະໝັກ ປ. ເອກ ຈຳນວນ..1...ທ່ານ ແລະ ປ. ໂທ ຈຳນວນ..2..ທ່ານ); ພ້ອມທັງປະກອບຂໍ້ມູນຕາມຮ່າງຕາຕະລາງສະໜອງຂໍ້ມູນຄັດຕິດມາພ້ອມນີ້ ແລ້ວນຳສົ່ງມາຍັງກົມຈັດຕັ້ງແລະພະນັກງານ **ຊ້າສຸດບໍ່ກາຍວັນທີ 08/9/2017** (ຖ້າກາຍກຳນົດເວລາດັ່ງກ່າວ ຖືວ່າສະຫຼະສິດ) ເພື່ອເປັນເປົ້າໝາຍສະເໜີຂັ້ນເທິງພິຈາລະນາສະໝັກເອົາທຶນການສຶກສາດັ່ງກ່າວ; ກົມຈັດຕັ້ງແລະພະນັກງານ ຈະແຈ້ງເປົ້າໝາຍທີ່ຖືກຄັດເລືອກ **ຊ້າສຸດບໍ່ກາຍວັນທີ 15/9/2017**, ຖ້າບໍ່ໄດ້ແຈ້ງຕອບດັ່ງກ່າວ ຖືວ່າບໍ່ໄດ້ຮັບການພິຈາລະນາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວດ້ວຍ.

ຫົວໜ້າກົມຈັດຕັ້ງແລະພະນັກງານ

ເສີມທະວີ **ສີຫາຝົນ**

✪ ຄັດຕິດມາພ້ອມນີ້:

- ຮ່າງຕາຕະລາງສະໜອງຂໍ້ມູນ 1 ສະບັບ.

(ຮ່າງ) ຕາຕະລາງສະໜອງຂໍ້ມູນຈະສະໝັກເອົາທຶນການສຶກສາໃນລະດັບຕ່າງໆ ພາຍໃຕ້ທຶນຂອງລັດຖະບານຍີ່ປຸ່ນ ສົກຮຽນ 2018-2019

| ລ/ດ | ຊື່ ແລະ ນາມສະກຸນ | ວ/ດ/ປ ເຂົ້າເປັນລັດຖະກອນ | | ຕຳແໜ່ງ | ພະແນກ | ໜ້າທີ່ຄວາມຮັບຜິດຊອບ | ວິຊາສະເພາະໃນປັດຈຸບັນ | | ຮຽນຈົບຈາກ | ສະໝັກເອົາທຶນ | | ຢູ່ສະຖາບັນ | ປະເມີນຜົນປະຈຳ 2 ປີ ຍ້ອນຫຼັງ | |
|---|---|---|---|---|---|---|---|---|---|---|---|---|---|---|
| | | ຝຶກງານ | ສົມບູນ | | | | ລະດັບ | ສາຂາ | | ລະດັບ | ສາຂາ | | 2014 | 2015 |
| I. | ທຶນການສຶກສາຂອງ JDS | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| II. | ທຶນການສຶກສາຂອງ ADB-JSP | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| III. | ທຶນການສຶກສາຂອງ JJ/WBGSP | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| IV. | ທຶນການສຶກສາຂອງ IMF-JISPA | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |
| | | | | | | | | | | | | | | |

ນະຄອນຫຼວງວຽງຈັນ, ວັນທີ

ເຊັນ ແລະ ຢັ້ງຢືນການຈັດຕັ້ງທີ່ກ່ຽວຂ້ອງ